# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ...ໜ້າ 01-06**

**II. ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ...................................................... ໜ້າ 07**

**III. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ.................................................... ໜ້າ 08-16**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ປະຈຳເດືອນ **ສິງຫາ 2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 21/8/2023, ທ່ານ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບ ທ່ານ Kassym-Jomart Tokayev, ປະທານາທິບໍດີກາຊັກສະຖານ ໃນໂອກາດຢ້ຽມຢາມຫວຽດນາມຢ່າງເປັນທາງການ. ຜູ້ນໍາທັງສອງ ໄດ້ຕີລາຄາສູງຕໍ່ການພົວພັນມິດຕະພາບທີ່ເປັນມູນເຊື້ອລະຫວ່າງສອງປະເທດຫວຽດນາມ-ກາຊັກສະຖານ, ຊຶ່ງ ປະທານໂຮ່ຈິມິນ ໄດ້ຢ້ຽມຢາມກາຊັກສະຖານ ໃນປີ 1959, ຊຶ່ງເປັນຈຸດກໍາເນີດສໍາຄັນໃຫ້ແກ່ສອງປະເທດ ມີການຮ່ວມມືທີ່ແໜ້ນແຟ້ນ, ມີການໄປມາຫາສູ່, ຮ່ວມກັນພັດທະນາປະເທດ ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີສາກົນ. ສອງຝ່າຍ ຢືນຢັນຈະສືບຕໍ່ເສີມຂະຫຍາຍການພົວພັນ, ເຊີດຊູການຮ່ວມມືບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ, ປະກອບສ່ວນສໍາຄັນ ເພື່ອສະຖຽນລະພາບໃນພາກພື້ນ ແລະ ສາກົນ.

ວັນທີ 07/08/2023, ສະຫາຍ ເວືອງດິ່ງເຫວະ (Vuong Dinh Hue), ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດຫວຽດນາມ ພ້ອມດ້ວຍຄະນະ ໄດ້ຢ້ຽມຢາມອິນໂດເນເຊຍ ຢ່າງເປັນທາງການ ຕາມການເຊື້ອເຊີນຂອງທ່ານ ນາງ Puan Maharani, ປະທານສະພາຜູ້ແທນລາຊະດອນ ສ. ອິນໂດເນເຊຍ ແລະ ເຂົ້າຮ່ວມກອງປະຊຸມສະມັດຊາລັດຖະສະພາອາຊຽນ AIPA-4 ເພື່ອສິ່ງເສີມການຮ່ວມມືວຽກງານລັດຖະສະພາ ລະຫວ່າງບັນດາປະເທດອາຊຽນ ແລະ ພາກພື້ນ; ຊຸກຍູ້ການຈັດຕັ້ງປະຕິບັດຍຸດທະສາດຂອງອາຊຽນ ຮອດປີ 2025 ເພື່ອໃຫ້ອາຊຽນມີຄວາມເຂັ້ມແຂງ, ເຊື່ອມຈອດ ເຊື່ອມໂຍງ, ສ້າງອາຊຽນໃຫ້ເປັນສູນກາງທາງດ້ານເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນອາຊຽນໃຫ້ນັບມື້ນັບດີຂຶ້ນ; ປະກອບສ່ວນສ້າງສັນຕິພາບ, ສະຖຽນລະພາບໃນພາກພື້ນ ແລະ ສາກົນ. ສ່ວນການຢ້ຽມຢາມສອງຝ່າຍ, ໄດ້ແລກປ່ຽນສາຍພົວພັນມິດຕະພາບ, ເພີ່ມທະວີການຮ່ວມມືລະຫວ່າງຫວຽດນາມ ແລະ ອິນໂດເນເຊຍ ເພື່ອຜົນປະໂຫຍດຂອງສອງປະເທດ.

ທ່ານ ເວືອງດິ່ງເຫວະ ໄດ້ຢ້ຽມຢາມອີຣານຢ່າງເປັນທາງການ ລະຫວ່າງວັນທີ 08-10/08/2023, ເປັນໂອກາດຄົບຮອບ 50 ປີ ແຫ່ງສາຍພົວພັນທາງການທູດ ຫວຽດນາມ-ອີຣານ (04/08/1973-04/08/2023), ຊຶ່ງໄດ້ພົບປະກັບທ່ານ Ebrahim Raisi, ປະທານາທິບໍດີອີຣານ; ທ່ານ Mohammad Bagher Ghalibaf, ປະທານສະພາອີຣານ, ສອງຝ່າຍ ຢໍ້າຄືນຈະສືບຕໍ່ການພົວພັນຮ່ວມມືໃນທຸກດ້ານ. ການຢ້ຽມຢາມຄັ້ງນີ້, ສອງຝ່າຍໄດ້ເຊັນສັນຍາຮ່ວມມືລະຫວ່າງສອງສະພາ.

ວັນທີ 22/8/2023, ສະຫາຍ ນາງ ເຈືອງຖິມາຍ, ກໍາມະການກົມການເມືອງ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ປະທານສະມາຄົມມິດຕະພາບລັດຖະສະພາ ຫວຽດນາມ - ຍີ່ປຸ່ນ ໄດ້ຕ້ອນຮັບ ທ່ານ Yamaguchi, ປະທານພັກ ໂກມິອິໂຕະ ຍີ່ປຸ່ນ (Komeito Party) ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ, ເຮັດວຽກຢູ່ ສສ ຫວຽດນາມ, ທັງເປັນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດຂອງສອງປະເທດ ຫວຽດນາມ-ຍີ່ປຸ່ນ ຄົບຮອບ 50 ປີ (21/9/1973-21/9/2023). ສອງຝ່າຍ ໄດ້ປຶກສາຫາລືແລກປ່ຽນການຮ່ວມມືດ້ານພັກ ແລະ ລັດ. ພັກໂກມິອິໂຕະ ເປັນພັກຮ່ວມລັດຖະບານ ກັບພັກເສລີປະຊາທິປະໄຕຍີ່ປຸ່ນ (LDP-Liberal Democratic Party), ຊຶ່ງໄດ້ເພີ່ມທະວີການຮ່ວມມືທີ່ດີກັບຫວຽດນາມຕະຫຼອດໄລຍະຜ່ານມາ, ນໍາຜົນປະໂຫຍດມາສູ່ສອງປະເທດ ກໍຄືປະຊາຊົນສອງຊາດ ຫວຽດນາມ-ຍີ່ປຸ່ນ. ທ່ານ Yamaguchi ຍັງໄດ້ພົບປະກັບ ສະຫາຍ ເລຮວາຍຈຸງ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ, ສອງຝ່າຍ ຢືນຢັນຈະສືບຕໍ່ເພີ່ມທະວີການແລກປ່ຽນ, ການຮ່ວມມື ດ້ວຍຫຼາຍຮູບການ ເພື່ອການພົວພັນລະຫວ່າງສອງພັກ, ສອງລັດ ໃນການພັດທະນາສອງປະເທດໃນຕໍ່ໜ້າ ແລະ ປະກອບສ່ວນຮັກສາສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ແລະ ສາກົນ.

### 2). ພັກກອມມູນິດຈີນ

ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປົດປ່ອຍປະຊາຊົນຈີນ ໃນວັນທີ 01/08/2023, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກໍາມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ, ປະທານຄະນະກໍາມະການການທະຫານສູນກາງຈີນ ໄດ້ຢ້ຽມຢາມກອງທັບອາກາດໃນພາກຕາເວັນຕົກຂອງປະເທດ ໂດຍໄດ້ສະແດງຄວາມຢື້ຢາມຖາມຂ່າວໄປຍັງນາຍ ແລະ ພົນທະຫານທຸກຖ້ວນໜ້າ. ສະຫາຍ ສີ ຈິ້ນຜິງ ໄດ້ເນັ້ນໜັກໃຫ້ຈັດຕັ້ງປະຕິບັດມະຕິກອງປະຊຸມ

ໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກກອມມູນິດຈີນ ໃຫ້ເຂົ້າສູ່ລວງເລິກ, ສ້າງກອງທັບໃຫ້ເຂັ້ມແຂງທັນສະໄໝ ຕາມຍຸກສະໄໝໃໝ່, ເດັດດ່ຽວເຮັດສຳເລັດພາລະໜ້າທີ່ຕ່າງໆ ທີ່ພັກ ແລະ ປະຊາຊົນມອບໝາຍໃຫ້.

**3). ພັກແຮງງານເກົາຫຼີ**

ວັນທີ 11/8/2023, ກອງປະຊຸມຄະນະກຳມະການທະຫານສູນກາງ ຄັ້ງທີ VII ສະໄໝທີ VIII ຂອງພັກແຮງງານເກົາຫຼີ ໄດ້ໄຂຂຶ້ນຢ່າງເປັນທາງການ ພາຍໃຕ້ການເປັນປະທານ ຂອງ ສະຫາຍ ກິມເຈີງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດ ແຫ່ງ ສປປ ເກົາຫຼີ ແລະ ມີບັນດາເຈົ້າໜ້າທີ່ ປກສ, ປກຊ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ. ສະຫາຍ ກິມເຈີງອຸນ ຕີລາຄາສູງຕໍ່ຜົນສຳເລັດຂອງກອງທັບປະຊາຊົນເກົາຫຼີ ໃນການພັດທະນາອາວຸດນິວເຄຼຍ ໃຫ້ກາຍເປັນກຳລັງທີ່ໜ້າເຊື່ອຖື ແລະ ສາມາດຮັບມືກັບສະຖານະການທີ່ເຄັ່ງຮ້ອນ ຢູ່ແຫຼມເກົາຫຼີ ໃນປັດຈຸບັນ; ໄດ້ປຶກສາຫາລືກ່ຽວກັບການຍົກລະດັບຄຸນະພາບທຸກດ້ານໃນວຽກງານການທະຫານ ໂດຍສະເພາະ ການເພີ່ມການຜະລິດອາວຸດ ແລະ ລູກປືນ ຄຽງຄູ່ກັບການຝຶກຊ້ອມດ້ານກຳລັງທະຫານ ເພື່ອກຽມຄວາມພ້ອມຕອບໂຕ້ ຕໍ່ອິດທິກຳລັງປໍລະປັກ; ກະກຽມຄວາມພ້ອມຂະບວນສວນສະໜາມ ເນື່ອງໃນໂອກາດ ວັນສ້າງຕັ້ງ ສປປ ເກົາຫຼີ ຄົບຮອບ 75 ປີ ໃນເດືອນກັນຍາ ທີ່ຈະມາເຖິງນີ້. ໃນກອງປະຊຸມ, ສະຫາຍ ກິມເຈີງອຸນ ໄດ້ປະກາດໃຫ້ ສະຫາຍ ພົນເອກ ປາຊູອິນ ລົງຈາກຕຳແໜ່ງປະທານຄະນະເສນາທິການທະຫານສູນກາງ ແລະ ແຕ່ງຕັ້ງໃຫ້ ສະຫາຍ ພົນເອກ ຣີຍອງກິນ ຂຶ້ນແທນ.

ວັນທີ 15/8/2023, ສະຫາຍ ກິມ ເຈີງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດແຫ່ງ ສປປ ເກົາຫຼີ ໄດ້ສົ່ງຈົດໝາຍຂອບໃຈເຖິງ ທ່ານ ປູຕິນ, ປະທານາທິບໍດີລັດເຊຍ ທີ່ສົ່ງສານອວຍພອນ ເນື່ອງໃນໂອກາດ ຄົບຮອບ 78 ປີ ວັນສິ້ນສຸດການຢູ່ພາຍໃຕ້ແອກປົກຄອງຍີ່ປຸ່ນ ຂອງ ສປປ ເກົາຫຼີ, ຊຶ່ງມີເນື້ອໃນບາງຕອນວ່າ: ສປປ ເກົາຫຼີ ແລະ ລັດເຊຍ ມີສາຍພົວພັນມິດຕະພາບທີ່ຍາວນານ ໂດຍສະເພາະແມ່ນການຕໍ່ສູ້ຄຽງບ່າຄຽງໄຫຼ່ ກັບ ສປປ ເກົາຫຼີ ເພື່ອປະກາດເອກະລາດຈາກການປົກຄອງຂອງ ຍີ່ປຸ່ນ ໃນໄລຍະສົງຄາມໂລກຄັ້ງທີ II; ສປປ ເກົາຫຼີ ຍິນດີຮ່ວມມືກັບ ລັດເຊຍ ເພື່ອຕ້ານກັບບັນດາອິດທິກຳລັງປໍລະປັກ ທີ່ຫວັງມ້າງເພທຳລາຍລະບອບສັງຄົມນິຍົມ ແລະ ຮ່ວມກັນຍົກລະດັບສາຍພົວພັນດ້ານຍຸດທະສາດໃຫ້ຂຶ້ນສູ່ລະດັບໃໝ່.

**4). ພັກກອມມູນິດກູບາ**

ວັນທີ 06 ສິງຫາ 2023, ສະຫາຍ Miguel Diaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານ ແລະ ປະຊາຊົນ Bolivia ເນື່ອງໃນໂອກາດສະເຫຼີມສະຫຼອງ 198 ປີ ແຫ່ງວັນໄດ້ຮັບເອກະລາດຂອງໂບລິວີ ຊຶ່ງມີບາງຕອນລະບຸວ່າ: ໂບລິວີ ເປັນແບບຢ່າງຂອງການຕໍ່ສູ້ຂອງປະຊາຊົນໃນປະຫວັດສາດ ເພື່ອກອບກູ້ເອກະລາດ ແລະ ອະທິປະໄຕແຫ່ງຊາດ; ຕີລາຄາສູງຕໍ່ສາຍພົວພັນຮ່ວມມືລະຫວ່າງກູບາ-ໂບລິວີ; ກູບາ ຈະສືບຕໍ່ສະໜັບສະໜູນການປະຕິວັດໂບລິວີ, ຮ່ວມມືກັນຕ້ານການແຊກແຊງຂອງຈັກກະພັດນິຍົມ.

ໃນວັນທີ 19-22 ສິງຫາ 2023, ສະຫາຍ Miguel Diaz-Canel ໄດ້ຢ້ຽມຢາມ Angola ຢ່າງເປັນທາງການ; ໄດ້ພົບປະກັບ ທ່ານ João Lourenço, ປະທານາທິບໍດີແອງໂກລາ, ສອງຝ່າຍໄດ້ຢືນຢັນຈະສືບຕໍ່ເປີດກວ້າງ ແລະ ຮັດແໜ້ນການຮ່ວມມືໃນຂົງເຂດທີ່ຕ່າງຝ່າຍຕ່າງມີຄວາມສົນໃຈ. ສອງຝ່າຍ ໄດ້ລົງນາມ 3 ເອກະສານຄື: ວຽກງານການທ່ອງທ່ຽວ, ການລົງທຶນ ແລະ ການຢາ. ທ່ານ Miguel Diaz-Canel ຍັງໄດ້ເຂົ້າຮ່ວມກອງປະຊຸມສຸດຍອດຂອງກຸ່ມ BRICS ໃນຖານະປະທານກຸ່ມ 77, ທີ່ຈັດຂຶ້ນຢູ່ນະຄອນໂຈຮັນເນສເບີກ, ອາຟລິກາໃຕ້ ລະຫວ່າງວັນທີ 22-24 ສິງຫາ 2023 ຜ່ານມາ.

ວັນທີ 08 ສິງຫາ 2023, ທ່ານ Esteban Lazo Hernández, ປະທານສະພາແຫ່ງຊາດອຳນາດປະຊາຊົນກູບາ ໄດ້ຕ້ອນຮັບການຢ້ຽມຢາມ ຂອງ ທ່ານ Diosdado Cabello Rondón, ຮອງປະທານຜູ້ທີໜຶ່ງ ພັກສັງຄົມນິຍົມເອກະພາບເວເນຊູເອລາ. ສອງຝ່າຍ ໄດ້ປຶກສາຫາລືຫຼາຍບັນຫາ ໂດຍສະເພາະແມ່ນການຮ່ວມມືຕ້ານການປິດລ້ອມຂອງອາເມລິກາ, ການສະໜັບສະໜູນເຊິ່ງກັນ ແລະ ກັນ ໃນເວທີພາກພື້ນ ແລະ ສາກົນ; ເວເນຊູເອລາ ຈະສືບຕໍ່ໃຫ້ການຊ່ວຍເຫຼືອກູບາ ແລະ ຮ່ວມມືກັນໃນການຕໍ່ສູ້ຕ້ານລັດທິຈັກກະພັດນິຍົມ.

**5). ການເມືອງກຳປູເຈຍ**

ພາຍຫຼັງສຳເລັດການເລືອກຕັ້ງທົ່ວປະເທດ ໃນເດືອນ 7/2023 ຜ່ານມາ, ວັນທີ 22/8/2023, ສະພາແຫ່ງຊາດກຳປູເຈຍ ໄດ້ເປີດກອງປະຊຸມຄັ້ງປະຖົມມະລຶກ ໂດຍໄດ້ລົງຄະແນນສຽງເລືອກເອົາ ທ່ານ ນາງ ກິດຕິສັງຂາຫາ ບັນດິດ ຂວນ ສຸດາຣີ (Hon. Kitti Sangahak Bandit KHOUN SUDARY) ເປັນປະທານສະພາ ດ້ວຍຄະແນນສຽງ 123 ສຽງ ຈາກ 125 ສຽງ; ທ່ານ ກິດຕິເສດຖາບັນດິດ ຈຽມ ຢຽບ (H.E. Kitti Setha Bindit CHEAM YEAP) ເປັນຮອງປະທານສະພາຜູ້ທີ 01 ແລະ ທ່ານ ວົງສຸດ (H.E.VONG SOTH) ເປັນຮອງປະທານສະພາຜູ້ທີ 02; ໄດ້ລົງຄະແນນສຽງເລືອກເອົາປະທານ ແລະ ຮອງປະທານກຳມາທິການທັງ 10 ກຳມາທິການຂອງສະພາແຫ່ງຊາດ. ກອງປະຊຸມ ຍັງໄດ້ຮັບຮອງເອົາ ທ່ານ ຮຸນ ມາແນດ, ເປັນນາຍົກລັດຖະມົນຕີຄົນໃໝ່. ພາຍຫຼັງການຮັບຮອງດັ່ງກ່າວ, ທ່ານ ຮຸນ ມາແນດ ໄດ້ຖະແຫຼງນະໂຍບາຍຂອງລັດຖະບານ ຊຸດທີ່ VII ຕໍ່ສະພາແຫ່ງຊາດ ປະກອບມີ 05 ຈຸດສຳຄັນຄື: ① ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມໝັ້ນຄົງ, ສັນຕິພາບ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ປົກປ້ອງເອກະລາດ, ອຳນາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ. ② ຮັບປະກັນການປັບປຸງການບໍລິຫານລັດ, ເສີມຂະຫຍາຍຫຼັກນິຕິລັດ ແລະ ຄວາມຍຸຕິທຳໃນສັງຄົມ, ເສີມຂະຫຍາຍປະສິດທິພາບ ແລະ ການຍົກສູງຄຸນນະພາບການບໍລິການສາທາລະນະ, ສືບຕໍ່ໃຫ້ບຸລິມະສິດໃນການພັດທະນາຊັບພະຍາກອນມະນຸດໃນທຸກສາຂາວິຊາ ໂດຍສະເພາະ ດ້ານສາທາລະນະສຸກ; ເສີມຂະຫຍາຍການລົງທຶນຂອງລັດ ແລະ ເອກະຊົນ, ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ③ ສືບຕໍ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍຜ່ານການສຶກສາອົບຮົມ ແລະ ຝຶກວິຊາຊີບໃຫ້ກັບຊາວໜຸ່ມ ໃຫ້ມີຄຸນນະພາບ ເພື່ອສ້າງວຽກເຮັດງານທຳໃຫ້ພວກເຂົາເຈົ້າ; ຊ່ວຍຊາວກະສິກອນເພີ່ມພູນການຜະລິດ ແລະ ຊອກຫາຕະຫຼາດທີ່ມີລາຄາເໝາະສົມ; ສືບຕໍ່ປັບຂຶ້ນຄ່າແຮງງານຂັ້ນຕ່ຳ ແລະ ເງິນອຸດໜູນຕ່າງໆໃຫ້ແກ່ກຳມະກອນຊາວຜູ້ອອກແຮງງານ ລວມທັງພະນັກງານ-ລັດຖະກອນ ແລະ ພະນັກງານບຳນານ. ④ ຮັບປະກັນຄວາມສະຫງົບສຸກໃນສັງຄົມ, ໃຫ້ປະຊາຊົນສາມາດເຂົ້າເຖິງວຽກງານປະກັນສັງຄົມ ໄດ້ຢ່າງສະດວກ. ⑤ ຮັບປະກັນການພັດທະນາເສດຖະກິດ-ສັງຄົມ, ຄົ້ນຄວ້າແຫຼ່ງທຶນທີ່ມີຄວາມຍືນຍົງ ເພື່ອຊຸກຍູ້ໃຫ້ມີການລົງທຶນສີຂຽວ ແລະ ເສດຖະກິດສີຂຽວ; ຊຸກຍູ້ການລົງທຶນສາທາລະນະ ທີ່ບໍ່ທຳລາຍສິ່ງແວດລ້ອມ. ໃນນັ້ນ, ຄະນະລັດຖະບານຊຸດທີ VII ປະກອບມີຮອງນາຍົກລັດຖະມົນຕີ 10 ທ່ານ; ລັດຖະມົນຕີອາວຸໂສ 21 ທ່ານ ແລະ ລັດຖະມົນຕີ 30 ທ່ານ.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟລິກາ

- ວັນທີ 18/08/2023, ອາເມລິກາ ໄດ້ເປັນເຈົ້າພາບຈັດກອງປະຊຸມສາມຝ່າຍລະຫວ່າງ ອາເມລິກາ, ສ. ເກົາຫຼີ ແລະ ຍີ່ປຸ່ນ ໂດຍການເຂົ້າຮ່ວມຂອງ ທ່ານ Joe Biden, ປະທານາທິບໍດີອາເມລິກາ, ທ່ານ Yoon Suk-Yeol, ປະທານາທິບໍດີ ສ.ເກົາຫຼີ ແລະ ທ່ານ Fumio Kishida, ນາຍົກລັດຖະມົນຕີຍີ່ປຸ່ນ, ທີ່ Camp David ລັດ Maryland ຂອງ ອາເມລິກາ, ຊຶ່ງສາມຝ່າຍໄດ້ອອກຖະແຫຼງການຮ່ວມກັນຕ້ານ ຈີນ ໃນຂົງເຂດອາຊີ-ປາຊີຟິກ. ອາເມລິກາ ແລະ ສ. ເກົາຫຼີ ໄດ້ຮ່ວມກັນຊ້ອມຮົບໃນດິນແດນຂອງ ສ. ເກົາຫຼີ ລະຫວ່າງວັນທີ 21-31/8/2023. ສ່ວນ ສປປ ເກົາຫຼີ ໄດ້ປະນາມການຊ້ອມຮົບດັ່ງກ່າວ ແລະ ໃນວັນທີ 24/8/2023, ສປປ ເກົາຫຼີ ໄດ້ທົດລອງຍິງດາວທຽມຂຶ້ນສູ່ອາວະກາດ ເປັນຄັ້ງທີ 2 ໂດຍໃຊ້ລະບົບການຍິງແບບດຽວກັບການຍິງຂີປະນາວຸດ, ແຕ່ບໍ່ປະສົບຄວາມສຳເລັດ ຄືກັບການຍິງຄັ້ງທຳອິດ ໃນເດືອນ 5/2023 ຜ່ານມາ, ທາງການ ສປປ ເກົາຫຼີ ໄດ້ປະກາດວ່າ ຈະມີການຍິງຄັ້ງທີ 3 ໃນເດືອນ 10/2023 ທີ່ຈະມາເຖິງນີ້.

- ລະຫວ່າງວັນທີ 10-13/08/2023, ທ່ານ ຫວັງອີ້, ກຳມະການກົມການເມືອງ, ຫົວໜ້າຫ້ອງການຄະນະກຳມະການວຽກງານຕ່າງປະເທດ, ລັດຖະມົນຕີຕ່າງປະເທດຈີນ ໄດ້ຢ້ຽມຢາມ 03 ປະເທດອາຊຽນ: ສິງກະໂປ, ມາເລເຊຍ ແລະ ກຳປູເຈຍ. ການຢ້ຽມຢາມສິງກະໂປ, ທ່ານ ຫວັງອີ້ ໄດ້ພົບປະກັບ ທ່ານ ຫຼີ ຊຽນຫຼົງ, ນາຍົກລັດຖະມົນຕີສິງກະໂປ ແລະ ຄູ່ຮ່ວມຕຳແໜ່ງຂອງສິງກະໂປ, ສອງຝ່າຍເຫັນດີເພີ່ມທະວີການຮ່ວມມືໃນຫຼາຍດ້ານພາຍຫຼັງສອງປະເທດໄດ້ຍົກລະດັບການພົວພັນສອງຝ່າຍຂຶ້ນເປັນການພົວພັນຍຸດທະສາດຮອບດ້ານໃນເດືອນ 03/2023 ຜ່ານມາ; ຈະຮ່ວມກັນປົກປັກຮັກສາສັນຕິພາບ, ເສລີພາບ ແລະ ການພັດທະນາໃນພາກພື້ນ. ການຢ້ຽມຢາມມາເລເຊຍ, ທ່ານ ຫວັງອີ້ ໄດ້ພົບປະກັບທ່ານ ຊຳບີ ອັບດູ ກາເດຍ, ລັດຖະມົນຕີຕ່າງປະເທດມາເລເຊຍ, ສອງຝ່າຍເຫັນດີຍົກລະດັບການລົງທຶນ, ລົງເລິກການຮ່ວມມືທາງດ້ານກະສິກຳ, ສ້າງຄວາມໝັ້ນຄົງທາງດ້ານອາຫານ ແລະ ຮ່ວມກັນແກ້ໄຂບັນຫາທະເລຈີນໃຕ້. ສ່ວນ ການຢ້ຽມຢາມກຳປູເຈຍ, ທ່ານ ຫວັງອີ້ ໄດ້ພົບປະກັບ ທ່ານ ຊຶກເຈນດາ ໂຊເປຍ, ລັດຖະມົນຕີຕ່າງປະເທດກຳປູເຈຍ, ທ່ານ

ຮຸນ ມາເນດ, ນາຍົກລັດຖະມົນຕີຄົນໃໝ່ ຂອງກຳປູເຈຍ, ສອງຝ່າຍໄດ້ຢ້ຳຄືນການພົວພັນທີ່ສະໜິດສະໜົມ, ເຫັນດີຍົກລະດັບການພົວພັນໃນຫຼາຍຂົງເຂດເປັນຕົ້ນ ດ້ານການເມືອງ, ການຜະລິດ, ກະສິກຳ, ພະລັງງານ, ຄວາມໝັ້ນຄົງ ແລະ ວັດທະນະທຳ; ເພີ່ມທະວີການພົວພັນຜ່ານກົນໄກໜຶ່ງແລວໜຶ່ງເສັ້ນທາງ ແລະ ຜັນຂະຫຍາຍການຮ່ວມມືພາຍໃຕ້ແຜນແມ່ບົດຄູ່ຮ່ວມຊະຕາກຳຈີນ-ກຳປູເຈຍ. ພ້ອມດຽວກັນ, ທ່ານ ຫວັງອີ້ ຍັງໄດ້ເຂົ້າຢ້ຽມຂຳນັບ ທ່ານ ຮຸນແຊນ, ອະດີດນາຍົກລັດຖະມົນຕີກຳປູເຈຍ ແລະ ເຈົ້າຊີວິດຂອງກຳປູເຈຍ.

- ການເມືອງໄທ, ພາຍຫຼັງການເລືອກຕັ້ງ ໃນວັນທີ 14/05/2023 ຜ່ານມາ, ພັກກ້າວໄກ ທີ່ໄດ້ບ່ອນນັ່ງ ສສ ເປັນອັນດັບ 1 ບໍ່ສາມາດຈັດຕັ້ງລັດຖະບານໄດ້ ເນື່ອງຈາກນະໂຍບາຍຂອງພັກກ້າວໄກ ບໍ່ໄດ້ຮັບການສະໜັບສະໜູນຈາກສະມາຊິກສະພາສູງ ແລະ ບໍ່ລົງຄະແນນສຽງໃຫ້, ຈຶ່ງຍອມໃຫ້ ພັກເພື່ອໄທ ທີ່ໄດ້ບ່ອນນັ່ງ ສສ ເປັນທີ 2 ເປັນຜູ້ນຳພາການຈັດຕັ້ງລັດຖະບານແທນ. ພັກເພື່ອໄທ ໄດ້ປຶກສາຫາລືກັບ 11 ພັກການເມືອງ ທີ່ມີຈຳນວນສະມາຊິກຜູ້ແທນລາຊະດອນ (ສສ) ທັງໝົດ 315 ບ່ອນນັ່ງ ເພື່ອຈັດຕັ້ງລັດຖະບານ ແລະ ໃນວັນທີ 22/08/2023, ກອງປະຊຸມລັດຖະສະພາຂອງໄທ ຄັ້ງທີ 03 ໄດ້ເລືອກເອົາ ທ່ານ ເສດຖາ ທະວີສິນ, ຈາກພັກເພື່ອໄທ ເປັນນາຍົກລັດຖະມົນຕີ ຄົນທີ 30 ຂອງໄທ, ໂດຍໄດ້ຮັບຄະແນນສຽງສະໜັບສະໜູນ 482 ສຽງ, ບໍ່ເຫັນດີ 165 ສຽງ ແລະ ງົດອອກສຽງ 81 ສຽງ ຈາກສະມາຊິກທັງໝົດ 747 ສຽງ. ໃນວັນດຽວກັນ, ທ່ານ ທັກສິນ ຊິນນະວັດ, ອະດີດນາຍົກລັດຖະມົນຕີໄທ ກໍໄດ້ເດີນທາງກັບປະເທດພາຍຫຼັງໜີຄະດີໄປ ຢູ່ຕ່າງປະເທດ 17 ປີ, ພາຍຫຼັງຮອດດິນແດນໄທ, ທ່ານ ທັກສິນ ໄດ້ຖືກກັກບໍລິເວນ ໃນຄ້າຍຂຸມຂັງພິເສດບາງກອກ ກ່ອນທີ່ທ່ານ ຈະຖືກສົ່ງໄປຍັງບ່ອນກວດສຸຂະພາບ.

- ການເມືອງມຽນມາ: ວັນທີ 01/08/2023, ສະພາປ້ອງກັນປະເທດ ແລະ ຄວາມໝັ້ນຄົງແຫ່ງຊາດມຽນມາ (NDSC) ໄດ້ຖະແຫຼງຂະຫຍາຍເວລາສະຖານະການສຸກເສີນໃນປະເທດອອກໄປຕື່ມຢ່າງໜ້ອຍ 06 ເດືອນ ຈົນເຖິງເດືອນກຸມພາ 2024. ພ້ອມດຽວກັນ, ໄດ້ປະກາດຫຼຸດຜ່ອນໂທດໃຫ້ ທ່ານ ນາງ ອອງຊານ ຊູຈີ ຈາກ 19 ຄະດີ ເຫຼືອ 14 ຄະດີ, ກັກບໍລິເວນ ຈາກ 33 ປີ ເຫຼືອ 27 ປີ. ຂະນະດຽວກັນ, ທ່ານ ມິນ ອອງລາຍ, ຜູ້ບັນຊາການທະຫານສູງສຸດ, ປະທານຄະນະກຳມະການຄຸ້ມຄອງແຫ່ງລັດມຽນມາ ກ່າວວ່າ ປັດຈຸບັນໃນປະເທດ ບໍ່ມີຄວາມສະຫງົບ. ສະນັ້ນ, ການເລືອກຕັ້ງທົ່ວໄປຂອງມຽນມາ ຈະບໍ່ເກີດຂຶ້ນໃນໄວໆນີ້. ພ້ອມນັ້ນ, ຄະນະກຳມະການການເລືອກຕັ້ງມຽນມາ (UEC) ໄດ້ສັ່ງຍຸບ ພັກສັນນິບາດແຫ່ງຊາດເພື່ອປະຊາທິປະໄຕ (NLD) ຂອງ ທ່ານ ນາງ ອອງຊານ ຊູຈີ ເນື່ອງຈາກພັກດັ່ງກ່າວບໍ່ໄດ້ຂຶ້ນທະບຽນກັບຄະນະກຳມະການການເລືອກຕັ້ງພາຍໃຕ້ກົດໝາຍການເລືອກຕັ້ງສະບັບໃໝ່.

- ການເມືອງນິເຊ (Niger): ວັນທີ 26/07/2023, ພົນເອກ Abdourahamane Omar Tiani ຂອງນິເຊ ໄດ້ກໍ່ລັດຖະປະຫານໂຄ່ນລົ້ມລັດຖະບານ ແລະ ໄດ້ຄວບຄຸມ ທ່ານ Mohamed Bazoum, ປະທານາທິບໍດີນິເຊ ແລະ ບັນດາຄະນະລັດຖະບານ. ພ້ອມດຽວກັນ, ບັນດາປະເທດທີ່ມີພົນລະເມືອງໄປເຮັດວຽກ, ອາໄສຢູ່ ນິເຊ ໄດ້ອົບພະຍົບພົນລະເມືອງຂອງຕົນອອກຈາກນິເຊ ເປັນຕົ້ນ ຝຣັ່ງ, ອິຕາລີ, ແອັດສະປາຍ ແລະ ເຢຍລະມັນ. ໃນວັນທີ 30/07/2023, ກອງປະຊຸມສຸກເສີນຂອງປະຊາຄົມເສດຖະກິດບັນດາປະເທດອາຟລິກາຕາເວັນຕົກ (ECOWAS) ທີ່ມີ 15 ປະເທດສະມາຊິກ ຈັດຂຶ້ນຢູ່ປະເທດນິເຊຣີ ໄດ້ເຕືອນວ່າ ECOWAS ອາດຈະໃຊ້ກຳລັງທະຫານ ກັບຜູ້ນຳການກໍ່ລັດຖະປະຫານນິເຊ ຖ້າຫາກພວກເຂົາບໍ່ຍອມຄືນອຳນາດໃຫ້ລັດຖະບານ ແລະ ປ່ອຍໂຕ ທ່ານ Bazoum, ເຮັດໃຫ້ກອງທັບນິເຊ ຂູ່ວ່າ ຈະສັງຫານປະທານາທິບໍດີນິເຊ ທັນທີ ຖ້າມີພາຍນອກໃຊ້ກຳລັງແຊກແຊງ. ຂະນະທີ່, ວັນທີ 18/08/2023, ປະເທດບວກກິນາຟາໂຊ ແລະ ມາລີ ໄດ້ສົ່ງຍົນສູ້ຮົບໄປນິເຊ ເພື່ອຊ່ວຍກອງທັບນິເຊ ຖ້າຫາກມີການໃຊ້ກຳລັງທະຫານຈາກພາຍນອກແຊກແຊງພາຍໃນນິເຊ. ແນວໃດກໍດີ, ໄດ້ເລີ່ມມີຂະບວນການເຈລະຈາ ລະຫວ່າງກອງທັບນິເຊ ແລະ ກຸ່ມ ECOWAS ເພື່ອເຮັດໃຫ້ສະຖານະການໃນນິເຊ ຜ່ອນຄາຍລົງ, ຊຶ່ງກອງທັບນິເຊ ໄດ້ສະເໜີສືບຕໍ່ຄວບຄຸມປະເທດໄປຕື່ມອີກ 03 ປີ ກ່ອນຈະຈັດເລືອກຕັ້ງໃນປະເທດແຕ່ກຸ່ມ ECOWAS ປະຕິເສດຕໍ່ຂໍ້ສະເໜີດັ່ງກ່າວ ເນື່ອງຈາກເຫັນວ່າໄລຍະເວລາດັ່ງກ່າວດົນເກີນໄປ. ສະຫະພາບອາຟລິກາ (AU) ຍັງໄດ້ສັ່ງໂຈະການເປັນສະມາຊິກຂອງກຸ່ມກັບເນຊີ.

-ການເມືອງເອກວາດໍ: ວັນທີ 09/08/2023, ທ່ານ Fernando Villavicencio, ອາຍຸ 59 ປີ ຈາກພັກຂະບວນການຝ່າຍຊ້າຍ (ພັກຮ່ວມລັດຖະບານເອກວາດໍຊຸດປັດຈຸບັນ), ອະດີດສະມາຊິກສະພາແຫ່ງຊາດ, ຜູ້ລົງສະໝັກເລືອກຕັ້ງປະທານາທິບໍດີເອກວາດໍ ໄດ້ຖືກຍິງເສຍຊີວິດ ໃນຂະນະລົງຫາສຽງທີ່ ນະຄອນຫຼວງກີໂຕ, ສ່ວນຜູ້ກໍ່ເຫດ ໄດ້ຖືກເຈົ້າໜ້າທີ່ ຍິງເສຍຊີວິດ. ທ່ານ Guillermo Lasso, ປະທານນາທິບໍດີເອກວາດໍ ກ່າວວ່າ ການກໍ່ອາຊະຍາກຳຄັ້ງນີ້ ເປັນໄພຄຸກຄາມຕໍ່ຄວາມໝັ້ນຄົງແຫ່ງຊາດ ແລະ ທ້າທາຍຕໍ່ອຳນາດຂອງລັດຖະບານ ພ້ອມທັງປະກາດພາວະສຸກເສີນທົ່ວປະເທດເປັນເວລາ 02 ເດືອນ ເພື່ອຮັກສາຄວາມປອດໄພ ໂດຍສະເພາະການເລືອກຕັ້ງປະທານາທິບໍດີ ທີ່ໄດ້ຈັດຂຶ້ນໃນວັນທີ 20/08/2023. ການກໍ່ອາຊະຍາກຳດັ່ງກ່າວ ຄາດວ່າໄດ້ຮັບການສະໜັບສະໜູນຈາກກຸ່ມຄ້າຂາຍຢາເສບຕິດພາຍໃນປະເທດ

ເນື່ອງຈາກນະໂຍບາຍຕົ້ນຕໍຂອງ ທ່ານ Villavicencio ແມ່ນການປາບປາມ ແລະ ກວາດລ້າງຂະບວນການຄ້າຂາຍຢາເສບຕິດ. ສ່ວນຜົນການເລືອກຕັ້ງຮອບທໍາອິດ ໃນວັນທີ 20/8/2023 ຜ່ານມາ, ສອງທ່ານ ທີ່ໄດ້ຄະແນນຫຼາຍກວ່າໝູ່ ແມ່ນ ທ່ານ ນາງ Luisa Gonzalez, ຈາກພັກຂະບວນການປະຕິວັດພົນລະເມືອງ (Citizen Revolution Movement), ຊຶ່ງເປັນພັກຝ່າຍຊ້າຍ ໄດ້ຄະແນນສຽງສະເລ່ຍ 33,6% ແລະ ທ່ານ Daniel Noboa, ຈາກພັກປະຊາທິປະໄຕແຫ່ງຊາດ (National Deocratic Action), ເປັນພັກກາງຂວາ ໄດ້ຄະແນນກວມ 23,4%; ຕາມລະບຽບການເລືອກຕັ້ງຂອງເອກວາດໍ, ຜູ້ສະໝັກ 2 ທ່ານ ທີ່ໄດ້ຄະແນນສູງກວ່າໝູ່ ຈະໄດ້ແຂ່ງຂັນຮອບສອງ ເພື່ອເລືອກເອົາປະທານາທິບໍດີ ຊຶ່ງຈະຈັດຂຶ້ນໃນວັນທີ 15/10/2023.

**2) ກອງປະຊຸມສຸດຍອດ ຂອງກຸ່ມ BRICS ຄັ້ງທີ 15**

ລະຫວ່າງວັນທີ 22-24/08/2023, ກອງປະຊຸມສຸດຍອດຜູ້ນໍາ BRICS ຄັ້ງທີ່ 15 ໄດ້ຈັດຂຶ້ນທີ່ນະຄອນຫຼວງໂຢຮັນເນດເບີກ, ອາຟລິກາໃຕ້, ໂດຍການເຂົ້າຮ່ວມແບບຊຶ່ງໜ້າຂອງຜູ້ນໍາຂອງ 5 ປະເທດສະມາຊິກ ຄື: ທ່ານ Cyril Ramaphosa, ປະທານາທິບໍດີອາຟລິກາໃຕ້, ທ່ານ Xi Jinping, ປະທານປະເທດຈີນ, ທ່ານ Luiz Inacio Lula da silva, ປະທານາທິບໍດີເບຣຊິນ, ທ່ານ Narendra Modi, ນາຍົກລັດຖະມົນຕີອິນເດຍ ແລະ ທ່ານ Sergei Larrov, ລັດຖະມົນຕີຕ່າງປະເທດລັດເຊຍ, ສ່ວນ ທ່ານປະທານາທິບໍດີ Putin ໄດ້ເຂົ້າຮ່ວມຜ່ານວີດີໂອທາງໄກ. ຍັງມີຜູ້ນໍາຈາກຫຼາຍປະເທດ ຖືກເຊີນເຂົ້າຮ່ວມກອງປະຊຸມດັ່ງກ່າວ ໂດຍສະເພາະແມ່ນບັນດາປະເທດທີ່ມີຄວາມສົນໃຈເຂົ້າເປັນສະມາຊິກຂອງກຸ່ມ BRICS . ກອງປະຊຸມໄດ້ປຶກສາຫາລືຫຼາຍບັນຫາ ເປັນຕົ້ນການຂະຫຍາຍສະມາຊິກຂອງກຸ່ມ (ມີ 23 ປະເທດຍື່ນໜັງສືສະເໜີເຂົ້າ ແລະ 45 ປະເທດ ໃຫ້ຄວາມສົນໃຈເຂົ້າເປັນສະມາຊິກ), ຊຶ່ງໃນກອງປະຊຸມຄັ້ງນີ້ ໄດ້ເຫັນດີຮັບເອົາ 6 ປະເທດ ເຂົ້າເປັນສະມາຊິກຂອງກຸ່ມ BRICS: ອາກຊັງຕິນ (Argentina), ເອທິໂອປີ (Ethiopia), ອີຣານ (Iran), ອາຣາບີ ຊາອຸດິດ (Saaudi Arabia), ອີຢິບ (Egypt) ແລະ ສະຫະນະຄອນ ເອເມຣັດ ອາຣັບ (United Arab Emirates) ແຕ່ 6 ປະເທດດັ່ງກ່າວ ຈະມີຜົນຢ່າງເປັນທາງການ ແຕ່ວັນທີ 1/1/2024 ເປັນຕົ້ນໄປ. ກອງປະຊຸມ ຍັງໄດ້ສະເໜີຂະຫຍາຍສະມາຊິກທະນາຄານພັດທະນາໃໝ່ (NDB) ເພື່ອເປັນສູນກາງດ້ານການເງິນຂອງປະເທດສະມາຊິກ, ມີການສືບຕໍ່ຊຸກຍູ້ໃຫ້ປະເທດສະມາຊິກ ນໍາໃຊ້ສະກຸນເງິນທ້ອງຖິ່ນ ເພື່ອຫຼຸດຜ່ອນການເພິ່ງພາສະກຸນເງິນໂດລາສະຫະລັດ. ນອກຈາກນັ້ນ, ຍັງມີການພົບປະນອກຮອບຂອງບັນດາຜູ້ນໍາ ເຊັ່ນ: ທ່ານ ສີ ຈິ້ນຜິງ ໄດ້ພົບປະກັບ ທ່ານ ຣາມາໂຟຊາ, ປະທານາທິບໍດີອາຟລິກາໃຕ້, ປຶກສາຫາລືກ່ຽວກັບຄູ່ຮ່ວມຍຸດທະສາດທີ່ໄວ້ເນື້ອເຊື່ອໃຈກັນ ລະຫວ່າງ ຈີນ-ອາຟລິກາໃຕ້; ການແລກປ່ຽນການຢ້ຽມຢາມລະຫວ່າງການນໍາຂັ້ນສູງ, , ສືບຕໍ່ລົງເລິກຄວາມໄວ້ເນື້ອເຊື່ອໃຈດ້ານການເມືອງ, ເພີ່ມທະວີການແລກປ່ຽນບົດຮຽນດ້ານການປົກຄອງບໍລິຫານປະເທດ, ການແລກປ່ຽນ ແລະ ການຮ່ວມມືໃນຂົງເຂດຕ່າງໆ, ການສະໜັບສະໜູນຊຶ່ງກັນ ແລະ ກັນ; ຊຶ່ງ ທ່ານ ສີ ຈິ້ນຜິງ ໃຫ້ຄໍາໝັ້ນສັນຍາຈະຊ່ວຍພັດທະນາໂຄງລ່າງພື້ນຖານ, ກະສິກໍາ, ອຸດສາຫະກໍາ ລວມທັງການທ່ອງທ່ຽວ, ການສຶກສາ, ເສດຖະກິດດີຈີຕອນ ແກ່ອາຟລິກາໃຕ້. ສ່ວນ ທ່ານ ຣາມາໂຟຊາ ໄດ້ປະດັບຫຼຽນໄຊອາຟລິກາ (ຫຼຽນໄຊສູງສຸດ) ໃຫ້ແກ່ ທ່ານ ສີ ຈິ້ນຜິງ. ທ່ານ ສີ ຈິ້ນຜິງ ຍັງໄດ້ພົບປະກັບ ທ່ານ Modi, ນາຍົກລັດຖະມົນຕີອິນເດຍ, ສອງຝ່າຍເຫັນດີຊ່ວຍກັນແກ້ໄຂຄວາມເຄັ່ງຕຶງໃນເຂດຊາຍແດນຂອງສອງປະເທດ ໂດຍການຖອນທະຫານຂອງຕົນຫຼາຍໝື່ນຄົນ ກັບຄືນປະເທດ. ນອກຈາກນັ້ນ, ທ່ານ ສີ ຈິ້ນຜິງ ໄດ້ພົບປະກັບ ທ່ານ Ebrahim Raisi, ປະທານາທິບໍດີອີຣານ, ຊຶ່ງ ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ຈີນ ພ້ອມຈະຮ່ວມມືກັບອີຣານ ໃນເວທີ BRICS ແລະ ເວທີອື່ນໆໃນໂລກ ເພື່ອພ້ອມກັນພັດທະນາໂລກໃຫ້ມີຄວາມເຂັ້ມແຂງ ແລະ ສະແດງຄວາມຊົມເຊີຍ ທີ່ ອີຣານ ໄດ້ເຂົ້າເປັນສະມາຊິກຂອງກຸ່ມ BRICS; ຊົມເຊີຍທີ່ອີຣານ ແລະ ອາຣັບບີ ຊາອຸດິດ ສາມາດຟື້ນຟູການພົວພັນ ເພື່ອສົ່ງເສີມສະຖຽນລະພາບໃນຕາເວັນອອກກາງ. ສ່ວນປະທານາທິບໍດີອີຣານ ໄດ້ສະແດງຄວາມຂອບໃຈ ທີ່ ຈີນ ກໍຄືປະເທດສະມາຊິກ ທີ່ໃຫ້ໂອກາດອີຣານ ເຂົ້າເປັນສະມາຊິກຂອງກຸ່ມ BRICS; ອີຣານ ຈະເລີ່ມສົ່ງເສີມບັນດາຂໍ້ລິເລີ່ມຕ່າງໆຂອງສປ ຈີນ ເຊັ່ນ: ຂໍ້ລິເລີ່ມການພັດທະນາໂລກ, ຂໍ້ລິເລີ່ມຄວາມໝັ້ນຄົງໂລກ ແລະ ຂໍ້ລິເລີ່ມດ້ານອະລິຍະທໍາໂລກ.

**3). ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ**

ການໂຈມຕີກັນລະຫວ່າງອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ, ຊຶ່ງ ສອງຝ່າຍ ເນັ້ນການໂຈມຕີດ້ວຍໂດຣນ. ວັນທີ 21/08/2023, ອູແກຣນ ພະຍາຍາມນໍາໃຊ້ໂດຣນ ໂຈມຕີບໍລິເວນສະໜາມບິນ 4 ແຫ່ງ ຢູ່ນະຄອນຫຼວງມົດສະກູ, ເຮັດໃຫ້ສາຍການບິນຫຼາຍສາຍຖືກເລື່ອນອອກໄປເພື່ອຮັບປະກັນຄວາມປອດໄພ. ອູແກຣນ ຍັງສືບຕໍ່ພະຍາຍາມໂຈມຕີໃສ່ຂົວ kerch ໃນແຫຼມໄຄຼເມຍ ແຕ່ຖືກລັດເຊຍ ຍິງສະກັດໄວ້ໄດ້ທັງໝົດ. ສ່ວນ ກອງທັບ

ລັດເຊຍ ໄດ້ສຸມໃສ່ໂຈມຕີທາງພາກຕາເວັນອອກຂອງອູແກຣນ, ເຄື່ອນກຳລັງເຂົ້າໄປໃກ້ກັບເມືອງ Kupiansk ທາງພາກພື້ນ Kharkov, ສາມາດທຳລາຍລົດຖັງ ທີ່ໄດ້ຮັບການຊ່ວຍເຫຼືອຈາກຕາເວັນຕົກ ໄດ້ຫຼາຍສິບຄັນ.

ປະເທດຕາເວັນຕົກ ຍັງສືບຕໍ່ສະໜັບສະໜູນອູແກຣນ, ໃນນັ້ນ ອາເມລິກາ ປະກາດຊ່ວຍເຫຼືອຄັ້ງໃໝ່ ມີມູນຄ່າ 200 ລ້ານໂດລາ ປະກອບດ້ວຍ ລູກປືນໃຫຍ່, ລະບົບປ້ອງກັນທາງອາກາດ Patriot ແລະ ລູກສອນໄຟ HIMARS; ຊູແອັດ ຊ່ວຍເຫຼືອດ້ານທະຫານ ມູນຄ່າ 314 ລ້ານໂດລາ. ລັດຖະບານນອກແວ ແລະ ດານມາກ ກໍໄດ້ປະກາດຈະສົ່ງເຄື່ອງບິນຮົບ F-16 ປະມານ 60 ລຳ ໃຫ້ອູແກຣນ ພາຍຫຼັງ ປະທານາທິບໍດີອູແກຣນ ໄດ້ຢ້ຽມຢາມສອງປະເທດດັ່ງກ່າວ ລະຫວ່າງວັນທີ 20-21/8/2023 ຜ່ານມາ, ແຕ່ການຈັດສົ່ງໄປໃຫ້ອູແກຣນ ອາດຈະແມ່ນປີ 2024-2025. ສ່ວນ ອາຣັບບິຊາອຸດິດ ໄດ້ເປັນເຈົ້າພາບຈັດກອງປະຊຸມສັນຕິພາບອູແກຣນ-ລັດເຊຍ, ມີ 40 ກວ່າປະເທດເຂົ້າຮ່ວມ (ຍົກເວັ້ນ ລັດເຊຍ) ໃນວັນທີ 5-6/08/2023 ຜ່ານມາ, ແຕ່ບໍ່ສາມາດຕົກລົງບັນຫາໃດໄດ້.

ວັນທີ 14/08/2023, ຢູ່ ນະຄອນຫຼວງວາກໂຊວີ, ປະເທດໂປໂລຍ ໄດ້ຈັດການລາດຕະເວນ ໂດຍມີທະຫານເຂົ້າຮ່ວມຫຼາຍພັນຄົນ ພ້ອມດ້ວຍລົດຖັງ ເພື່ອສະແດງຄວາມເຂັ້ມແຂງທາງດ້ານກຳລັງທະຫານຂອງຕົນ ແລະ ອ້າງວ່າເພື່ອປ້ອງກັນໄພຂົ່ມຂູ່ຈາກເບລາຣຸດຊີ. ປັດຈຸບັນ, ມີທະຫານໂປໂລຍ 10.000 ຄົນ ປະຈຳການຢູ່ຊາຍແດນ ລະຫວ່າງໂປໂລຍ ແລະ ເບລາຣຸດຊີ.

ຄຽງຄູ່ກັບສະຖານະການທີ່ເກີດຂຶ້ນ, ກອງທັບລັດເຊຍ ໄດ້ຝຶກຊ້ອມຮົບ ຢູ່ ເຂດມະຫາສະໝຸດອາກຕິກ (ຂົ້ວໂລກເໜືອ) ໃນວັນທີ 11/08/2023 ຜ່ານມາ ໂດຍໄດ້ນຳໃຊ້ເຮືອຮົບລຸ້ນໃໝ່ ເຂົ້າຮ່ວມຝຶກຊ້ອມນຳ. ວັນທີ 14/08/2023, ທ່ານ ປູຕິນ ໄດ້ກ່າວໃນງານວາງສະແດງສິນຄ້າ Army-2023 ທີ່ ຈັດຂຶ້ນຢູ່ນະຄອນຫຼວງມົດສະກູ ວ່າ: ລັດເຊຍ ຍິນດີຈະພັດທະນາຮ່ວມມືດ້ານເຕັກນິກທາງທະຫານກັບປະເທດອື່ນໆ ຢ່າງເທົ່າທຽມ ແລະກ່າວວ່າ ມີຫຼາຍກວ່າ 1.500 ບໍລິສັດ ທີ່ນຳສະເໜີຕົວຢ່າງຜະລິດຕະພັນທາງທະຫານທີ່ທັນສະໄໝ 28.500 ຕົວຢ່າງ. ຄາດວ່າ ຈະມີການເຈລະຈາສັນຍາຊື້ຂາຍຕ່າງໆໃນງານດັ່ງກ່າວ ປະມານ 500 ຕື້ຣູບ ຫຼື 8 ຕື້ໂດລາ. ນອກນັ້ນ, ວັນທີ 15/08/2023, ໄດ້ມີກອງປະຊຸມມົດສະກູ ວ່າດ້ວຍຄວາມໝັ້ນຄົງສາກົນ ຄັ້ງທີ 11 ໂດຍການເຂົ້າຮ່ວມຂອງ ທ່ານ ປູຕິນ ແລະ ມີລັດຖະມົນຕີປ້ອງກັນປະເທດຂອງຫຼາຍປະເທດໃນອາຊີ ແລະ ເອີຣົບ, ທ່ານ ປູຕິນ ໄດ້ມີຄຳເຫັນວ່າ: ລະບຽບໂລກຫຼາຍຂົ້ວ ແມ່ນເພື່ອຄວາມຍືນຍົງຂອງປະຊາຄົມໂລກ; ຄວາມຂັດແຍ່ງອູແກຣນ-ລັດເຊຍ ມີຄວາມຮຸນແຮງຂຶ້ນ ຍ້ອນຕາເວັນຕົກໃຫ້ການຊ່ວຍເຫຼືອອູແກຣນ ຢ່າງຕໍ່ເນື່ອງ. ສ່ວນ ລັດຖະມົນຕີຕ່າງປະເທດລັດເຊຍ ໄດ້ສະແດງຄວາມຂອບໃຈຕໍ່ຈີນ, ເບຣຊິນ, ອາຟລິກາໃຕ້, ເອຢິບ ແລະ ອິນເດຍ ທີ່ພະຍາຍາມຊອກວິທີສົ່ງເສີມສັນຕິພາບໃນອູແກຣນ.

ລັດເຊຍ ຍັງໄດ້ເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດເຊຍ-ອາຟລິກາ ຄັ້ງທີ 02 ລະຫວ່າງວັນທີ 27-28/07/2023 ຢູ່ນະຄອນ St. Petersburg ມີຜູ້ແທນຈາກ 49 ປະເທດໃນອາຟລິກາເຂົ້າຮ່ວມ. ກອງປະຊຸມໄດ້ປຶກສາຫາລືກ່ຽວກັບເສດຖະກິດ, ມະນຸດສະທຳ, ພະລັງງານ ແລະ ອື່ນໆ. ລັດເຊຍ ເຫັນດີຈະຊ່ວຍແກ້ໄຂບັນຫາພະລັງງານແກ່ບັນດາປະເທດອາຟລິກາ. ນອກນັ້ນ, ລັດເຊຍ ໄດ້ປະກາດລົບລ້າງໜີ້ໃຫ້ບັນດາປະເທດອາຟລິກາ ຫຼາຍກວ່າ 20 ຕື້ໂດລາ. ສ່ວນບັນຫາອູແກຣນ-ລັດເຊຍ, ທ່ານ Putin, ປະທານາທິບໍດີລັດເຊຍ ໄດ້ກ່າວວ່າ ລັດເຊຍ ພ້ອມທີ່ຈະເຈລະຈາ, ແຕ່ ອູແກຣນໄດ້ປະຕິເສດ. ພາຍຫຼັງສຳເລັດກອງປະຊຸມດັ່ງກ່າວ, ທ່ານ Putin ໄດ້ເຊີນບັນດາຜູ້ນຳອາຟລິກາ ເຂົ້າຮ່ວມພິທີສະເຫຼີມສະຫຼອງວັນກອງທັບເຮືອ ປະຈຳປີ ຂອງລັດເຊຍ ທີ່ປະກອບດ້ວຍທະຫານ 3.000 ຄົນ; ເຮືອຮົບ, ເຮືອດຳນ້ຳ 45 ລຳ. ໃນພິທີ ທ່ານ Putin ໄດ້ກ່າວຄຳເຫັນສະແດງຄວາມຊົມເຊີຍຕໍ່ຄວາມກ້າຫານ ແລະ ເສຍສະລະຂອງທະຫານທັງໝົດ, ທຸກຄົນຄືວິລະບຸລຸດຂອງຊາດ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# II. ການເຄື່ອນໄຫວ ຂອງການນຳ ພັກ ປປ ລາວ

## ເລຂາທິການໃຫຍ່ພັກ ປປ ລາວ ພົບປະຜ່ານວີດີໂອທາງໄກກັບ ປະທານພັກປະຊາຊົນ ກຳປູເຈຍ




ວັນທີ 8 ສິງຫາ 2023, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດລາວ ໄດ້ພົບປະຜ່ານວີດີໂອທາງໄກກັບ ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ, ປະທານພັກປະຊາຊົນກຳປູເຈຍ, ນາຍົກລັດຖະມົນຕີກຳປູເຈຍ, ສະຫາຍ ທອງລຸນ ສີສຸລິດ ໄດ້ສະແດງຄວາມຍິນດີທີ່ໄດ້ພົບປະໃນຄັ້ງນີ້ ພ້ອມທັງໄດ້ແຈ້ງສະພາບການພົ້ນເດັ່ນພາຍໃນ ສປປ ລາວ ທັງໄດ້ສົນທະນາກ່ຽວກັບສະພາບການພາກພື້ນ ແລະ ສາກົນ ທີ່ສອງຝ່າຍໃຫ້ຄວາມສົນໃຈ; ນອກນັ້ນ, ສະຫາຍ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ໄຊຊະນະໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ຂອງພັກປະຊາຊົນ ກຳປູເຈຍ ໃນວັນທີ 23/7/2023 ຜ່ານມາ. ສອງຝ່າຍ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ຄວາມສາມັກຄີ ຖານບ້ານໃກ້ເຮືອນຄຽງທີ່ດີ ແລະ ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກຳປູເຈຍ.

ໃນໂອກາດທີ່ກຳປູເຈຍ ກຳລັງປັບປຸງຄະນະລັດຖະບານຊຸດໃໝ່ ໂດຍຈະມີ ທ່ານ ຮຸນ ມາແນດ ເປັນນາຍົກລັດຖະມົນຕີຄົນໃໝ່, ສະຫາຍເລຂາທິການໃຫຍ່ ພັກ ປປ ລາວ, ປະທານປະເທດລາວ ໄດ້ສະແດງຄວາມຊົມເຊີຍ ແລະ ສະແດງຄວາມຍິນດີຈະໃຫ້ການສະໜັບສະໜູນລັດຖະບານກຳປູເຈຍຊຸດໃໝ່ ເພື່ອສືບຕໍ່ປະຕິບັດມູນເຊື້ອການຮ່ວມມື ລະຫວ່າງ ສອງພັກ ກໍຄື ລະຫວ່າງ ສອງລັດຖະບານ; ຕີລາຄາສູງ ຕໍ່ບັນດາຜົນສຳເລັດອັນພົ້ນເດັ່ນທີ່ ພັກ, ລັດ ແລະ ປະຊາຊົນກຳປູເຈຍ ຍາດມາໄດ້ໃນການປົກປັກຮັກສາ, ສ້າງສາ ແລະ ພັດທະນາປະເທດຊາດຂອງຕົນ, ພ້ອມທັງເຊື່ອໝັ້ນວ່າ ພາຍໃຕ້ການຊີ້ນຳ-ນຳພາອັນເຂັ້ມແຂງຂອງ ພັກປະຊາຊົນກຳປູເຈຍ ອັນມີ ສົມເດັດ ເຕໂຈ ຮຸນແຊນ ເປັນຜູ້ນຳພາ, ພັກ-ລັດຖະບານ ແລະ ປະຊາຊົນກຳປູເຈຍ ຈະສາມາດຍາດໄດ້ໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການສ້າງສາ ແລະ ພັດທະນາປະເທດຊາດ ໃຫ້ກ້າວໄປສູ່ຄວາມຈະເລີນວັດທະນາ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ພິທີສະເຫຼີມສະຫຼອງ ຄຕພ ຄົບຮອບ 40 ປີ




ວັນທີ 09 ສິງຫາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ (29/6/1983 – 29/6/2023) ພາຍໃຕ້ການເປັນປະທານ ຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນ ຕ່າງປະເທດສູນກາງພັກ, ໂດຍການໃຫ້ກຽດເຂົ້າຮ່ວມ ຂອງ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານ ງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ, ມີບັນດາສະຫາຍການນຳ ແລະ ອະດີດການນຳຄະນະພົວພັນ ຕ່າງປະເທດສູນກາງພັກ ຕະຫຼອດຮອດພະນັກງານ-ລັດຖະກອນ ແລະ ພະນັກງານບຳນານທົ່ວ ຄຕພ ເຂົ້າຮ່ວມຢ່າງ ພ້ອມພຽງ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ທວນຄືນມູນເຊື້ອຂອງຄະນະພົວພັນຕ່າງປະເທດສູນກາງພັກຕະຫຼອດ ໄລຍະ 40 ປີ ຜ່ານມາ ໂດຍຍົກໃຫ້ເຫັນຄວາມເປັນມາ, ການເຕີບໃຫຍ່ຂະຫຍາຍຕົວ, ຜົນສຳເລັດອັນໃຫຍ່ຫຼວງ, ມູນເຊື້ອ ແລະ ບົດຮຽນອັນອຸດົມສົມບູນໃນແຕ່ລະໄລຍະຂອງຄະນະພົວພັນຕ່າງປະເທດສູນກາງພັກ ກໍຄືການປະຕິບັດໜ້າທີ່ເປັນ ເສນາທິການໃຫ້ແກ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ໃນ ການຄົ້ນຄວ້າແຜນຍຸດທະສາດ, ແນວທາງນະໂຍບາຍການຕ່າງປະເທດຂອງພັກ; ການຕິດຕໍ່ພົວພັນຮ່ວມມືກັບພັນດາພັກ ການເມືອງ ຂອງ ຕ່າງປະເທດໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ; ຊີ້ນຳ, ຄຸ້ມຄອງການເຄື່ອນໄຫວວຽກງານພົວພັນ ຕ່າງປະເທດສາຍພັກ, ການທູດປະຊາຊົນໃຫ້ມີຄວາມເປັນເອກະພາບຜ່ານປະຕູດຽວ; ຕິດຕາມ, ຊຸກຍູ້ ແລະ ກວດກາການ ປະຕິບັດແນວທາງນະໂຍບາຍຂອງພັກ ກ່ຽວກັບວຽກງານການພົວພັນຕ່າງປະເທດດ້ານພັກ ເພື່ອເຊີດຊູຖານະບົດບາດ ຂອງ ພັກປະຊາຊົນ ປະຕິວັດລາວ ກໍຄື ສປປ ລາວ ໃນເວທີສາກົນ, ຍາດແຍ່ງການສະໜັບສະໜູນຈາກສາກົນ, ສ້າງ ເງື່ອນໄຂອຳນວຍຄວາມສະດວກແກ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ເປັນເຈົ້າການໃນການ

ຊີ້ນຳການທູດປະຊາຊົນ, ປະສານງານໃຫ້ແກ່ບັນດາອົງການຈັດຕັ້ງພັກ, ສູນກາງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນໃນການເຄື່ອນໄຫວຕ່າງປະເທດ ແນໃສ່ເຜີຍແຜ່ແນວທາງນະໂຍບາຍ ຂອງ ພັກ-ລັດ ເພື່ອການຮ່ວມມືພັດທະນາປະເທດຊາດ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ, ປະກອບສ່ວນສ້າງສັນຕິພາບ, ມິດຕະພາບ, ສະຖຽນລະພາບ ແລະ ການຮ່ວມມືໃນພາກພື້ນ-ສາກົນ. ພ້ອມກັນນັ້ນ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຍັງໄດ້ລາຍງານກ່ຽວກັບໝາກຜົນການພົວພັນຮ່ວມມືສາຍພັກ ແລະ ລັດ, ເປີດກ້ວາງການພົວພັນກັບຕ່າງປະເທດ ໂດຍບໍ່ຈຳແນກລະບອບການເມືອງທີ່ແຕກຕ່າງກັນ, ຕັ້ງໜ້າເປັນເຈົ້າການເປີດກ້ວາງການພົວພັນກັບບັນດາພັກການເມືອງຕ່າງປະເທດໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ, ຊຶ່ງມາເຖິງປັດຈຸບັນ ພັກເຮົາໄດ້ມີການພົວພັນກັບ 140 ພັກການເມືອງ ໃນ 83 ປະເທດທົ່ວໂລກ; ເຂົ້າເປັນສະມາຊິກໃນຂອບການຮ່ວມມືຫຼາຍຝ່າຍກັບ 3 ອົງການຈັດຕັ້ງສາກົນ (ກອງປະຊຸມສາກົນຂອງບັນດາພັກການເມືອງໃນອາຊີ (ICAPP), ກອງປະຊຸມສາກົນ ຂອງ ບັນດາພັກກອມມູນິດ ແລະ ກຳມະກອນສາກົນ (IMCWP), ກອງປະຊຸມເວທີປຶກສາຫາລືຊາວປາວໂລ), ອັນພົ້ນເດັ່ນ ແມ່ນໄດ້ຖືກຮັບເຂົ້າເປັນສະມາຊິກໜ່ວຍງານວິຊາການ ຂອງ IMCWP; ສ້າງຕັ້ງສະມາຄົມມິດຕະພາບກັບຕ່າງປະເທດທັງໝົດມີ 19 ສະມາຄົມ ແລະ 1 ຄະນະສັນຕິພາບ ແລະ ສາມັກຄີ ຂອງ ລາວ ກັບຕ່າງປະເທດ. ສຳລັບການພົວພັນໃນສາຍລັດ, ສປປ ລາວ ໄດ້ສ້າງຕັ້ງສາຍພົວພັນການທູດກັບ 148 ປະເທດ, ມີສຳນັກງານຜູ້ຕາງໜ້າ ຂອງ ຕົນ ປະຈຳຢູ່ຕ່າງປະເທດ 42 ແຫ່ງ (ສະຖານເອກອັກຄະລັດຖະທູດ 28 ແຫ່ງ, ສຳນັກງານຜູ້ຕາງໜ້າຖາວອນ 3 ແຫ່ງ, ສະຖານກົງສຸນໃຫຍ່ 10 ແຫ່ງ ແລະ ຫ້ອງການກົງສຸນ 1 ແຫ່ງ).

ການສະເຫຼີມສະຫຼອງວັນສ້າງຕັ້ງ ຄະນະພົວພັນຕ່າງປະເທດສູນກາງພັກຄົບຮອບ 40 ປີ ຄັ້ງນີ້, ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ໃຫ້ກຽດມີຄຳເຫັນເນັ້ນໜັກໃຫ້ຄະນະພົວພັນຕ່າງປະເທດສູນກາງພັກ ສືບຕໍ່ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອ ແລະ ຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ໃຫ້ແຂງແຮງກວ່າເກົ່າ; ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນກຳແໜ້ນແນວທາງ ຂອງ ພັກ-ລັດ; ລະບຽບກົດໝາຍຂອງປະເທດຊາດ; ປັບປຸງກົງຈັກການຈັດຕັ້ງຕາມທິດກະທັດຮັດ, ມີປະສິດທິຜົນ, ກຳນົດພາລະບົດບາດ, ສິດໜ້າທີ່, ຕຳແໜ່ງງານໃຫ້ຈະແຈ້ງ ແລະ ບັນຈຸຊັບຊ້ອນພະນັກງານໃຫ້ແທດເໝາະກັບໜ້າທີ່ວຽກງານ, ສ້າງພະນັກງານ ຄຕພ ໃຫ້ເປັນມືອາຊີບ, ເປັນຜູ້ຊ່ຽວຊານຊຳນານງານແຕ່ລະດ້ານ; ກຳນົດກົນໄກ, ລະບອບລະບຽບການເຄື່ອນໄຫວວຽກງານໃຫ້ມີຄວາມໂລ່ງລ່ຽນ, ທັນສະໄໝ, ວ່ອງໄວ; ໃນນີ້ຕ້ອງສືບຕໍ່ເປັນເຈົ້າການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງ ພັກ, ມະຕິຕ່າງໆ ຂອງ ຄະນະບໍລິຫານງານສູນກາງພັກ, ຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ; ເພີ່ມທະວີການນຳພາຂອງຕົນ ຕໍ່ທຸກຂົງເຂດວຽກງານໃຫ້ແທດເຖິງ. ສະຫາຍ ໄດ້ຍົກຄວາມເວົ້າທີ່ວ່າ **"ຄິດເລິກ ເບິ່ງໄກ ແລະ ໄປຖືກ"** ເປັນຂໍ້ແຂ່ງຂັນ ໃຫ້ແຕ່ລະກົມ ແລະ ສະມາຊິກພັກ, ພະນັກງານ-ລັດຖະກອນສູ້ຊົນປະຕິບັດ ເພື່ອສ້າງໃຫ້ຄະນະພົວພັນຕ່າງປະເທດສູນກາງພັກໃຫ້ມີການເຄື່ອນໄຫວທີ່ແຂງແຮງກວ່າເກົ່າ.

2. ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີປາຖະກະຖາວັນສຳຄັນຂອງພັກ-ລັດ ແລະ ປະກາດຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ




ວັນທີ 22 ສິງຫາ 2023, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປາຖະກະຖາ ວັນຄ້າຍວັນເກີດປະທານ ສຸພານຸວົງ ຄົບຮອບ 114 ປີ ແລະ ເຜີຍແຜ່ມະຕິ 6 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ XI ພາຍໃຕ້ການເປັນປະທານ ແລະ ໃຫ້ກຽດເຜີຍແຜ່ໂດຍ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າ ຄຕພ ຊຶ່ງມີບັນດາຄະນະບໍລິຫານງານພັກ, ຫ້ອງການ, ບັນດາກົມ, ພະແນກ, ສະມາຊິກພັກ, ພະນັກງານ ເຂົ້າຮ່ວມ 70 ສະຫາຍ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ຍົກໃຫ້ເຫັນເຖິງຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງ ປະທານ ສຸພານຸວົງ ຊຶ່ງເປັນໜຶ່ງໃນຜູ້ນຳສູງສຸດ ຂອງພັກ ແລະ ລັດ ທີ່ຕິດພັນກັບຂະບວນການປະຕິວັດ, ເປັນວິສະວະກອນເອກ ຂອງປະເທດລາວ ແລະ ເປັນນັກການເມືອງທີ່ມີຈິດໃຈສາກົນອັນຜ່ອງໃສ, ມີຄວາມຈົ່ງຮັກພັກດີຮ່ວມກັບຜູ້ນຳຄົນອື່ນໆນຳພາຂະບວນການຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານຢ່າງອົງອາດກ້າຫານ ຈົນສາມາດປົດປ່ອຍປະເທດຊາດໄດ້ໃນວັນທີ 2 ທັນວາ 1975. ຄຸນງາມຄວາມດີ ແລະ ຄວາມເປັນແບບຢ່າງອັນໃສແຈ້ງ ຂອງປະທານ ສຸພານຸວົງ ໄດ້ກາຍເປັນມໍລະດົກອັນລ້ຳຄ່າທີ່ປະໄວ້ໃຫ້ຄົນຮຸ່ນຫຼັງ, ພະນັກງານ-ລັດຖະກອນ ຄຕພ ທຸກຄົນຕ້ອງໄດ້ຈາລຶກບຸນຄຸນ ແລະ ຮ່ຳຮຽນເອົາເປັນແບບຢ່າງ ເພື່ອປະຕິບັດໜ້າທີ່ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນໄລຍະໃໝ່.

ສະຫາຍ ທອງສະຫວັນ ຍັງໄດ້ເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ຊຶ່ງໄດ້ຍົກໃຫ້ເຫັນສະພາບການຂອງໂລກ ທີ່ພວມຜັນແປຢ່າງສັບສົນ ສົ່ງຜົນສະທ້ອນຕໍ່ສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງຢູ່ໃນພາກພື້ນ, ສາກົນ ແລະ ຕໍ່ປະເທດລາວ ໂດຍສະເພາະຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ຄາດຄະເນທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ວຽກງານປ້ອງກັນຄວາມສະຫງົບ ໃນສະພາບການໃໝ່, ການຈັດຕັ້ງປະຕິບັດວຽກງານການພົວພັນຄົນເຊື້ອຊາດລາວຢູ່ຕ່າງປະເທດແຕ່ປີ 2007- 2022 ແລະ ທິດທາງແຜນການໃນຕໍ່ໜ້າ, ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ.

ໂອກາດດຽວກັນ, ກໍໄດ້ຈັດພິທີມອບບັດສະມາຊິກພັກສົມບູນຊຸດທີ V ໃຫ້ 12 ສະຫາຍ ແລະ ປະກາດການແຕ່ງຕັ້ງຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ ຈຳນວນ 4 ສະຫາຍ.

### 3. ຫວນຄືນມູນເຊື້ອວັນສ້າງຕັ້ງ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ຄົບຮອບ 40 ປີ



ວັນທີ 1 ສິງຫາ 2023, ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ໄດ້ຈັດກອງປະຊຸມພົບປະ ເພື່ອຫວນຄືນມູນເຊື້ອວັນສ້າງຕັ້ງຄະນະສັນຕິພາບ ແລະ ສາມັກຄີຂອງລາວ ຄົບຮອບ 40 ປີ, ໂດຍການເລົ່າມູນເຊື້ອຂອງ ທ່ານ ສົມມາດ ພົລເສນາ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວ.

ຄະນະສັນຕິພາບ ແລະ ສາມັກຄີຂອງລາວ (Lao Committee for Peace and Solidarity) ແຕ່ກ່ອນເອີ້ນວ່າ ຄະນະກຳມະການລາວ ເພື່ອສັນຕິພາບ, ສາມັກຄີ ແລະ ມິດຕະພາບກັບປະຊາຊາດ (Lao Committee for Peace, Solidarity and Friendship with Peoples) ແມ່ນອົງການຈັດຕັ້ງສັງຄົມຂອງລາວ, ສ້າງຕັ້ງຂຶ້ນໃນວັນທີ 1 ສິງຫາ 1983 ໂດຍແມ່ນ ທ່ານ ສິງກະໂປ ສີໂຄດຈຸນລະມານີ ເປັນປະທານຜູ້ທຳອິດ. ໃນເວລານັ້ນ, ຄະນະກຳມະການນີ້ ມີຖານະເປັນອົງການຈັດຕັ້ງທີ່ມີງົບປະມານ ແລະ ກົງຈັກສະເພາະ. ມາຮອດປີ 1999, ກົມການເມືອງສູນກາງພັກ ໄດ້ຕົກລົງໂອນ ຄະນະກຳມະການລາວ ເພື່ອສັນຕິພາບ, ສາມັກຄີ ແລະ ມິດຕະພາບ ກັບປະຊາຊາດ ມາຂຶ້ນກັບ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ປ່ຽນຊື່ມາເປັນ ຄະນະສັນຕິພາບ ແລະ ສາມັກຄີຂອງ ແລະ ແຕ່ງຕັ້ງ ທ່ານ ດຣ. ສີໂຫ ບັນນະວົງ, ຮອງປະທານສູນກາງແນວລາວສ້າງຊາດ ໃນເວລານັ້ນ ເປັນປະທານ. ນັບແຕ່ນັ້ນມາ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ໄດ້ມີການປັບປຸງກົງຈັກການຈັດຕັ້ງ 3 ຄັ້ງ. ຄັ້ງທີ 1 ແມ່ນ ທ່ານ ຄຳພັນ ສິມມາລາວົງ (2008-2016), ນັກການທູດອາວຸໂສ ເປັນປະທານ, ຄັ້ງທີ 2 (2016-2022) ແມ່ນ ທ່ານ ສົມພັນ ແພງຄຳມີ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ໃນເວລານັ້ນ) ເປັນປະທານ  ແລະ ຄັ້ງທີ 3 (2022-ປັດຈຸບັນ) ແມ່ນ ທ່ານ ສົມມາດ ພົລເສນາ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນປະທານ ແລະ ປະກອບມີຮອງປະທານ, ເລຂາທິການ ແລະ ກຳມະການລວມທັງໝົດ 9 ທ່ານ.

ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ມີຜົນສຳເລັດຫຼາຍຢ່າງໃນການປະກອບສ່ວນເຄື່ອນໄຫວສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການສ້າງສັນຕິພາບ ແລະ ການພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ເຮັດໃຫ້ສາກົນຮັບຮູ້ບົດບາດ ຂອງຄະນະສັນຕິພາບ ແລະ ສາມັກຄີຂອງລາວ ກໍຄືບົດບາດ ຂອງ ສປປ ລາວ ຫຼາຍຂຶ້ນ. ຊຶ່ງໃນປີ 2008, ຄະນະກຳມະການຄ້ອງສັນຕິພາບ ອິນໂດເນເຊຍ ໄດ້ມອບລາງວັນອັນຊົງກຽດຄື **"ຄ້ອງສັນຕິພາບໂລກ (World Peace Gong)"** ໃຫ້ແກ່ ສປປ ລາວ, ເປັນປະເທດທຳອິດໃນບັນດາປະເທດອາຊຽນ ແລະ ເປັນປະເທດທີ່ 4 ໃນໂລກ (ຖັດຈາກຈີນ, ອິນເດຍ, ໂມຊຳບິກ) ທີ່ໄດ້ຮັບລາງວັນອັນຊົງກຽດດັ່ງກ່າວຈາກ ຄະນະກຳມະການສັນຕິພາບໂລກອິນໂດເນເຊຍ. ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ຍັງໄດ້ຈັດກິດຈະກຳລະດົມປັດໄຈຊ່ວຍເຫຼືອ ຜູ້ປະສົບໄພທຳມະຊາດທັງຢູ່ພາຍ

ໃນ ແລະ ຕ່າງປະເທດ ເຊັ່ນ: ຈັດຄອນເສີດລະດົມທຶນ ເພື່ອຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ຢູ່ 3 ແຂວງພາກໃຕ້ ຂອງ ລາວປີ 2009 ໄດ້ 300 ກວ່າລ້ານກີບ, ຈັດຄອນເສີດລະດົມປັດໄຈຊ່ວຍເຫຼືອ ປະຊາຊົນປະເທດໄຮຕີ ປະສົບແຜ່ນດິນໄຫວ ປີ 2010 ມູນຄ່າ 15,000 ໂດລາສະຫະລັດ ແລະ ຈັດຄອນເສີດລະດົມປັດໄຈຊ່ວຍເຫຼືອປະຊາຊົນ ຍີ່ປຸ່ນປະສົບ ໄພສຶນາມິ ໃນເດືອນມີນາ ປີ 2011 ໄດ້ 500 ກວ່າລ້ານກີບ, ເປັນເຈົ້າພາບຈັດກອງປະຊຸມຂົງເຂດອາຊີປາຊີຟິກ ແລະ ກອງປະຊຸມຄະນະເລຂາຂອງສະພາສັນຕິພາບໂລກ ໃນປີ 2019. ຍັງໄດ້ຂົນຂວາຍທຶນຮອນນຳຄູ່ຮ່ວມມືມາສ້າງສາພັດທະນາ ສປປ ລາວ, ນັບແຕ່ປີ 2013-2022 ໄດ້ລະດົມຂົນຂວາຍທຶນ ສ້າງໂຮງຮຽນປະຖົມ ແລະ ມັດທະຍົມໄດ້ ທັງໝົດ 17 ຫຼັງ ແລະ ອຸປະກອນການຮຽນການສອນ ລວມມູນຄ່າ 3 ລ້ານ ກວ່າໂດລາ ແລະ 15 ລ້ານກວ່າຢວນ.

**4. ຄະນະພົວພັນຕ່າງປະເທດສູນກາງພັກ ອວຍພອນວັນຊາດ ຫວຽດນາມ ຄົບຮອບ 78 ປີ**



ວັນທີ 28 ສິງຫາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍພະນັກງານຫຼັກແຫຼ່ງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ໄປອວຍພອນສະຖານເອກອັກຄະລັດຖະທູດ ສສ ຫວຽດນາມ ປະຈຳ ສປປ ລາວ ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນສະຖາປະນາສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 78 ປີ (02/09/1945-02/09/2023). ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ, ມີຄວາມໝາຍປະຫວັດສາດ ທີ່ປະຊາຊົນຫວຽດນາມ ອ້າຍນ້ອງ ຍາດມາໄດ້ຕະຫຼອດໄລຍະ 78 ປີ ຜ່ານມາ ພາຍໃຕ້ການນຳພາອັນຖືກຕ້ອງ, ສະຫຼາດສ່ອງໃສ ຂອງພັກກອມມູນິດ ຫວຽດນາມ, ເຮັດໃຫ້ ສສ ຫວຽດນາມ ສືບຕໍ່ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ຊີວິດການເປັນຢູ່ຂອງປະຊາຊົນ ຫວຽດນາມ ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ, ການພົວພັນຮ່ວມມືກັບສາກົນໄດ້ຮັບການເປີດກວ້າງ, ອັນໄດ້ເຮັດໃຫ້ບົດບາດ, ອິດທິພົນຂອງພັກ, ລັດ ຫວຽດນາມ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ, ສ້າງປະເທດຫວຽດນາມ ສັງຄົມນິຍົມ ໃຫ້ນັບມື້ນັບຮັ່ງມີເຂັ້ມແຂງ ແລະ ສຳເລັດການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດ ຫວຽດນາມຢ່າງມີໄຊ.

ສະຫາຍ ຍັງໄດ້ຕີລາຄາສູງ ຕໍ່ການພົວພັນຮ່ວມມືລະຫວ່າງ ສອງພັກ, ສອງລັດ ແລະ ປະຊົນສອງຊາດ ລາວ-ຫວຽດນາມ ທີ່ນັບມື້ນັບມີຄວາມເລິກຊຶ້ງ ໃນທຸກຂົງເຂດວຽກງານ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ສອງ

ຊາດ ລາວ-ຫວຽດນາມ ນັບມື້ນັບຫຼາຍຂຶ້ນ; ຍິນດີຮ່ວມກັບສະຫາຍ ທູດ ກໍຄືພະນັກງານສະຖານທູດຫວຽດນາມ ສືບຕໍ່ປະສານສົມທົບກັນຢ່າງແໜ້ນແຟ້ນ ໃນການຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ, ສັນຍາການຮ່ວມມືລະຫວ່າງສອງພັກ, ສອງລັດ ລາວ-ຫວຽດນາມ, ພ້ອມທັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ຕໍ່ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນ ຊ່ວຍເຫຼືອຢ່າງໃຫຍ່ຫຼວງ, ລ້ຳຄ່າ, ມີປະສິດທິຜົນ ແລະ ທັນການ ໃຫ້ແກ່ ສປປ ລາວ ໃນໄລຍະຕໍ່ສູ້ ເພື່ອປົດປ່ອຍຊາດໃນເມື່ອກ່ອນ ກໍຄື ໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ.

### 5. ຄະນະຜູ້ແທນຄະນະສັນຕິພາບ ຫວຽດນາມ ຢ້ຽມຢາມ ສປປ ລາວ



ຄະນະຜູ້ແທນຄະນະສັນຕິພາບ ຫວຽດນາມ ນຳໂດຍ ສະຫາຍ ອອງ ຈູ ລິວ, ອະດີດກຳມະການສູນກາງພັກ, ອະດີດຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບຫວຽດນາມ ໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ລະຫວ່າງວັນທີ 19-22 ສິງຫາ 2023, ໂດຍໄດ້ເຂົ້າຮ່ວມກອງປະຊຸມພົບປະສອງຝ່າຍ ລະຫວ່າງ ຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແລະ ຄະນະສັນຕິພາບ ຫວຽດນາມ, ຝ່າຍລາວ ນຳໂດຍ ສະຫາຍ ສົມມາດ ພົລເສນາ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີຂອງລາວແລະ ຝ່າຍຫວຽດນາມ ນຳໂດຍ ສະຫາຍ ອອງ ຈູ ລິວ. ຊຶ່ງສອງຝ່າຍ ໄດ້ແຈ້ງສະພາບການພົ້ນເດັ່ນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະປະເທດ, ປຶກສາຫາລື, ແລກປ່ຽນປະສົບການເຄື່ອນໄຫວວຽກງານສັນຕິພາບ, ທັດສະນະກ່ຽວກັບສະພາບການພົ້ນເດັ່ນຂອງພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີ ຄວາມສົນໃຈ. ພ້ອມນັ້ນ, ສອງຝ່າຍຍັງໄດ້ຈັດກອງປະຊຸມແລກປ່ຽນວຽກງານການທູດປະຊາຊົນລາວ ແລະ ຫວຽດນາມ, ຊຶ່ງມີການແລກປ່ຽນຂໍ້ມູນ, ບົດຮຽນຊຶ່ງກັນແລະກັນ ຢ່າງມີເນື້ອໃນອຸດົມສົມບູນ ແລະ ມີບັນຍາກາດ. ຄະນະຜູ້ແທນດັ່ງກ່າວ ຍັງໄດ້ເຂົ້າຢ້ຽມຊົມສຳນັກການນຳລາວຈຳນວນໜຶ່ງ.

**6. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງຄະນະຜູ້ແທນ ສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ.**



ວັນທີ 07 ສິງຫາ 2023, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ໂອ ມິງ ຮວັນ (Oh Myung Hwan), ປະທານສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ. ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ, ເປັນການປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດ ກໍຄື ປະຊາຊົນສອງຊາດ ລາວ ແລະ ສ.ເກົາຫຼີ ໃຫ້ນັບມື້ໄດ້ຮັບການພັດທະນາ. ພ້ອມນັ້ນ, ຍັງໄດ້ຊົມເຊີຍຕໍ່ການພົວພັນຮ່ວມມືສອງຝ່າຍ ຂອງສອງສະມາຄົມມິດຕະພາບ ທີ່ເຮັດບົດບາດໃນການຊຸກຍູ້ການພົວພັນດ້ານຕ່າງໆ ຂອງ ສປປ ລາວ ແລະ ສ. ເກົາຫຼີ ແລະ ໄດ້ປະກອບສ່ວນເຂົ້າໃນການສ້າງສາພັດທະນາຢູ່ ສປປ ລາວ ໂດຍສະເພາະດ້ານການສຶກສາ, ສາທາລະນະສຸກ, ມະນຸດສະທຳ ແລະ ການແກ້ໄຂຄວາມທຸກຍາກ, ທັງສະໜັບສະໜູນ ແລະ ຊຸກຍູ້ການຮ່ວມມືໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ວັດທະນະທຳ, ການທ່ອງ ທ່ຽວ ແລະ ອື່ນໆ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ - ສ.ເກົາຫຼີ. ສ່ວນ ທ່ານ ໂອ ມິງ ຮວັນ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ໄດ້ລາຍງານການເຄື່ອນໄຫວ ຂອງສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ ໂດຍຫຍໍ້ໃຫ້ຊາບ, ທັງສະແດງຄວາມຂອບໃຈທີ່ ສປປ ລາວ ໄດ້ປະດັບຫຼຽນໄຊ, ຫຼຽນກາມິດຕະພາບ ໃຫ້ແກ່ຄະນະສະມາຄົມມິດຕະພາບ ສ.ເກົາຫຼີ-ລາວ ໃນເດືອນເມສາ 2023 ຜ່ານມາ, ພ້ອມທັງຢືນຢັນຈະສືບຕໍ່ພົວພັນຮ່ວມມືກັບສະມາຄົມມິດຕະພາບ ລາວ - ສ.ເກົາຫຼີ ໃນການປະຕິບັດພາລະບົດບາດຂອງຕົນ ບົນພື້ນຖານ ແລະ ຜັນຂະຫຍາຍເນື້ອໃນບົດບັນທຶກຄວາມເຂົ້າໃຈ (MOU) ທີ່ສອງສະມາຄົມໄດ້ເຊັນຮ່ວມກັນ ເພື່ອປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນ ສ.ເກົາຫຼີ ແລະ ສປປ ລາວ. ຄະນະຜູ້ແທນ ຍັງໄດ້ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫົວພັນ ເພື່ອສະໜັບສະໜູນທຶນສ້າງອາຄານໂຮງຮຽນປະຖົມສົມບູນ ຢູ່ບ້ານກ້ານ, ເມືອງຊຳເໜືອ, ແຂວງຫົວພັນ.

**7. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງທ່ານເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມຄົນໃໝ່ ແຫ່ງ ສ.ອິນເດຍ ປະຈຳ ສປປ ລາວ.**



ວັນທີ 11 ສິງຫາ 2023 ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ປຣາຊານຕ໌ ອາເກົ່ວາລ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມຄົນໃໝ່ ແຫ່ງ ສ. ອິນເດຍ ປະຈຳ ສປປ ລາວ. ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍ ທີ່ ທ່ານ ເອກອັກຄະລັດຖະທູດ ໄດ້ຮັບການແຕ່ງຕັ້ງຈາກລັດຖະບານອິນເດຍ ໃຫ້ມາປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ; ທັງໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ແລະ ການຮ່ວມມື ລະຫວ່າງ ສປປ ລາວ ແລະ ສ.ອິນເດຍ ຕະຫຼອດ 67 ປີ ຜ່ານມາ, ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຊ່ວຍເຫຼືອຂອງລັດຖະບານອິນເດຍ ໃຫ້ແກ່ ສປປ ລາວ, ໂດຍສະເພາະ ແມ່ນການຈັດຕັ້ງປະຕິບັດບັນດາໂຄງການ ພາຍໃຕ້ຂອບການຮ່ວມມືແມ່ນ້ຳຂອງ-ຄົງຄາ ກໍຄື ບັນດາໂຄງການເຫັນຜົນໄວ ເປັນຕົ້ນແມ່ນ ການສົ່ງເສີມການປູກຝັງ, ລ້ຽງສັດ, ການກໍ່ສ້າງພື້ນຖານໂຄງລ່າງ ດ້ານການສຶກສາ, ສາທາລະນະສຸກ, ການສົ່ງເສີມການຄ້າ-ການລົງທຶນ, ການພັດທະນາຊົນນະບົດ, ການພັດທະນາຊັບພະຍາກອນມະນຸດ ແລະ ຂະແໜງການອື່ນໆ ອັນເປັນການປະກອບສ່ວນອັນສຳຄັນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ນອກນັ້ນ ຍັງໄດ້ແຈ້ງກ່ຽວກັບ ທີ່ຕັ້ງ ແລະພາລະບົດບາດຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຍິນດີຈະຮ່ວມກັບ ທ່ານທູດອິນເດຍ ໃນການຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ສປປ ລາວ ແລະ ສ.ອິນເດຍ ເປັນຕົ້ນການພົວພັນດ້ານພັກ, ສະມາຄົມມິດຕະພາບ ແລະ ອົງການຈັດຕັ້ງມະຫາຊົນ ໃຫ້ນັບມື້ໄດ້ຮັບການພັດທະນາຍິ່ງໆຂຶ້ນ ເພື່ອພາລະກິດແຫ່ງ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ ກໍຄື ການນຳເອົາຜົນປະໂຫຍດຕົວຈິງ ມາສູ່ ປະຊາຊົນສອງຊາດ ລາວ-ອິນເດຍ, ອິນເດຍ-ລາວ ໃຫ້ສູງຂຶ້ນເລື້ອຍໆ.

## 8. ຮອງຫົວໜ້າ ຄຕພ ຕ້ອນຮັບການເຂົ້າພົບປະຂອງ ປະທານກຳມາທິການຕ່າງປະເທດ ພັກຊ້າຍເຢຍລະມັນ



ວັນທີ 15 ສິງຫາ 2023, ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າພົບປະຂອງ ສະຫາຍ Wulf Gallert, ປະທານກຳມາທິການຕ່າງປະເທດ ພັກຊ້າຍເຢຍລະມັນ, ຮອງປະທານສະພາທ້ອງຖິ່ນ ລັດ Saxony-Anhalt, ເຢຍລະມັນ. ສະຫາຍ ວາລະໄຊ ໄດ້ສະແດງຄວາມຍິນດີຕ້ອນຮັບຄະນະຜູ້ແທນຄັ້ງນີ້ ຊຶ່ງເປັນຄັ້ງທຳອິດທີ່ຄະນະຜູ້ແທນພັກຊ້າຍເຢຍລະມັນ ທີ່ມາພົບກັບຄະນະພົວພັນຕ່າງປະເທດ ກໍຄືມາຢ້ຽມຢາມ ສປປ ລາວ, ເປັນບັນຍາກາດທີ່ດີ ທ່າມກາງການສະເຫຼີມສະຫຼອງສາຍພົວພັນການທູດ ລາວ-ເຢຍລະມັນ ຄົບຮອບ 65 ປີ (1958-2023). ສະຫາຍ ວາລະໄຊ ຍັງໄດ້ແຈ້ງໃຫ້ຊາບ ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ: ການແກ້ໄຂສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ການເງິນ; ແກ້ໄຂບັນຫາເສດຖະກິດ. ສຳລັບການຮ່ວມມື ລະຫວ່າງ ພັກ ປປລາວ ແລະ ພັກຊ້າຍເຢຍລະມັນ, ສອງຝ່າຍແມ່ນເຫັນດີສືບຕໍ່ປຶກສາຫາລື, ແລກປ່ຽນຄວາມຄິດເຫັນ ເພື່ອຍົກລະດັບການພົວພັນຂັ້ນຕໍ່ໄປຂອງສອງພັກ.